ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ ປະຈຳ ຊູແອດ

ເລກທີ 08/ສລສ.ກສ.17
ທີ່ ສະຕ໋ອກໂຮມ, ວັນທີ 15 ເມສາ 2017

# <u>ແຈ້ງການ</u>

ເຖິງ: ບັນດາທ່ານ ພໍ່ແມ່ ພີ່ນ້ອງຄົນເຊື້ອຊາດລາວ ທີ່ມີຈຸດປະສົງຂໍວີຊາເຂົ້າ ສປປ ລາວ ຕ່າງໆຈາກສະຖານທູດ

ໂດຍອີງຕາມຂໍ້ຕົກລົງຂອງຂອງສະຖານທູດ ສະບັບເລກທີ 07/ສລສ.ກສ.17, ລົງວັນທີ 15 ເມສາ 2017 ກ່ຽວກັບ ການເກັບຄ່າທຳນຽມ ວີຊາ ສຳລັບຄົນເຊື້ອຊາດລາວທີ່ໄດ້ຍົກເວັ້ນຄ່າທຳນຽມ ວີຊາ ໃນໄລຍະຜ່ານມາ, ເພື່ອເຮັດໃຫ້ການບໍລິການແກ່ຊາວລາວທີ່ຕ່າງປະເທດມີຄວາມສະດວກຂຶ້ນຕື່ມ, ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ທີ່ ສະຕ໋ອກໂຮມ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ພໍ່ແມ່ ພີ່ນ້ອງຊາວລາວ ທີ່ອາໄສຢູ່ປະເທດ ຊູແອດ, ນອກແວ, ແຟງລັງ , ເດັນມາກ ແລະ ປະເທດອື່ນໆ ທີ່ເຂົ້າມາຂໍວີຊາເຂົ້າ ສປປ ລາວ ນຳສະຖານທູດພວກເຮົາ ທີ່ ສະຕ໋ອກໂຮມ ຊາບທົ່ວເຖິງກັນວ່າ ນັບແຕ່ວັນທີ 01 ມິຖຸນາ 2017 ເປັນຕົ້ນໄປ ສະຖານທູດຈະໄດ້ເກັບຄ່າບໍລິການເອກະສານສຳລັບການອອກ ວີຊາ ຈຳນວນ 50 ກູຣອນ/ຄົນ/ເທື່ອ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາ ພໍ່ແມ່ ພີ່ນ້ອງຊາວລາວ ທີ່ ສະວີເດັນ ແລະ ຕ່າງປະເທດ ເພື່ອຊາບຕາມທາງຄວນ

ເອກອັກຄະລັດຖະທູດ ແຫ່ງ ສປປ ລາວ

ບຸນແພງ ຊາຍກັນຍາ